# Lao A: literature – Standard level – Paper 1
# Lao A : littérature – Niveau moyen – Épreuve 1
# Laosiano A: literatura – Nivel medio – Prueba 1

Wednesday 4 May 2016 (afternoon)
Mercredi 4 mai 2016 (après-midi)
Miércoles 4 de mayo de 2016 (tarde)

1 hour 30 minutes / 1 heure 30 minutes / 1 hora 30 minutos

---

### Instructions to candidates

- Do not open this examination paper until instructed to do so.
- Write a guided literary analysis on one passage only. In your answer you must address both of the guiding questions provided.
- The maximum mark for this examination paper is **[20 marks]**.

### Instructions destinées aux candidats

- N’ouvrez pas cette épreuve avant d’y être autorisé(e).
- Rédigez une analyse littéraire dirigée d’un seul des passages. Les deux questions d’orientation fournies doivent être traitées dans votre réponse.
- Le nombre maximum de points pour cette épreuve d’examen est de **[20 points]**.

### Instrucciones para los alumnos

- No abra esta prueba hasta que se lo autoricen.
- Escriba un análisis literario guiado sobre un solo pasaje. Debe abordar las dos preguntas de orientación en su respuesta.
- La puntuación máxima para esta prueba de examen es **[20 puntos]**.


© International Baccalaureate Organization 2016

ໃຫ້ເຈົ້າວິຈານໃນແງ່ວັນນະຄະດີ**ໜຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້
ໃນຄໍາຕອບເຈົ້າຕ້ອງເວົ້າເຖິງຄໍາຖາມ**ທັງສອງ**ທີ່ຂຽນໄວ້ຫລັງເລື່ອງ

**1.**

ຊາຕິທ້າວພະຍາ ມີບຸນຍະສົມພານມາກໄດ້ຫອມທັບນັບມາ ມາກນັກ ແຕ່ພາຍຫຼັງຜູ້ນ ມີໄພ່ໄທທັງຫຼາຍອັນເຂົ້າມາໃນອານາຈັກແຫ່ງຕົນນັ້ນ ຈິ່ງໄດ້ມາເປັນທ້າວພະຍານີ້ ເຫດດັ່ງນັ້ນ ເພິ່ງຮັກສາໄພ່ໄທທັງຫຼາຍ ເມືອງໃດແລ ຮັກສາໄພ່ໄທດັ່ງນັ້ນ ກໍຫາກຈັກເປັນກໍາລັງ ບ້ານເມືອງແຫ່ງຕົນແລ ຊາຕິທ້າວພະຍາຮັກສາໄພ່ໄທຕົນໃຫ້ດີ ໃຫ້ເປັນດັ່ງທວາຍ ຈາມມະລີຮັກສາຫາງມັນເທີ້ນ ຕາມນິທານອັນເກົ່າແກ່ ພະຍາມູນລະຕັນໄຕຍະລາດກ່າວວ່າ ມີຕໍານານນິທານທວາຍຈາມມະລີ ເຊິ່ງອາຈານທັງຫຼາຍແຕ່ກ່ອນກ່າວສືບໆມາ ແຕ່ປະຖົມມະກັບ ຫົວທີ ມີວັນໜຶ່ງ ທວາຍຈາມມະລີ ຂໍພອນກັບມະຫາພົມ ຂ້າແກ່ມະຫາພົມເຈົ້າ ຂ້າກໍຂໍພອນ ເຊິ່ງເຈົ້າກູບັດນີ້ ແຮກແຕ່ນີ້ ເມື່ອໜ້າ ຂ້ານີ້ຂໍຈົ່ງໃຫ້ປະກອບໄປດ້ວຍຫາງອັນໃຫຍ່ແລະ ຍາວແລະພວງງາມ ມີເສັ້ນຫາງກໍໃຫ້ແລບກຽງ ອ່ອນແລະປຽດ ເມື່ອໃດຂ້າໄປຄວ່າຫາກິນໃຫ້ໄດ້ງ່າຍ ເມື່ອນັ້ນ ມະຫາພົມຈິ່ງກູນາມັນ ຈິ່ງໃຫ້ພອນແກ່ທວາຍຈາມມະລີວ່າ ແຮກແຕ່ນີ້ ເມື່ອໜ້າ ຜີມຶງຮັກສາຫາງມຶງໄດ້ແທ້ ຈົ່ງໃຫ້ມຶງມີຫາງອັນໃຫຍ່ແລະພວງງາມນັກ ເມື່ອໃດຫາງມຶງລະງອກ ອອກມາດັ່ງນັ້ນມຶງໄປຄວ່າຫາກິນ ໃຫ້ອີ່ມອາຫານ ຢູ່ສໍາຣານປະໝານໄດ້ເຈັດວັນເທີ້ນ ຜີມຶງຮັກສາຫາງບໍ່ໄດ້ ໃຫ້ຂາດເສັຍ ແລເສັ້ນດັ່ງນັ້ນ ໃຫ້ມຶງຢາກອາຫານປະໝານສາມວັນ ປະການໜຶ່ງ ຫາງມຶງໄປຫຼົ້ນເທື່ອໜຶ່ງຮັກສາບໍ່ໄດ້ ໃຫ້ມຶງຢາກອາຫານເຈັດວັນເທີ້ນ ເຫດແລມີ ດັ່ງນັ້ນ ທວາຍຈາມມະລີ ກະທໍາພຽນຮັກສາຫາງ ບໍ່ໃຫ້ຂາດ ເສັຍແລ ອັນນີ້ເປັນຕໍານານ ນິທານທວາຍຈາມມະລີຮັກສາຫາງ ເມື່ອນັ້ນ ທ້າວພະຍາທັງຫຼາຍ ໄດ້ຮູ້ກິດຈະແຫ່ງ ທວາຍຈາມມະລີຮັກສາຫາງມັນດັ່ງນັ້ນ ກໍຍິນດີມາກນັກ ຈິ່ງບູຊາພະຍາຕັນໄຕເອກກະລາດ

ບໍ່ປາກົດຊື່ຜູ້ແຕ່ງ *ມູລະຕັນໄຕ* (ບໍ່ປາກົດປີແຕ່ງ)

(ກ) ຜູ້ຂຽນໃນເລື່ອງນີ້ຊີ້ອີ່ຫຍັງກ່ຽວກັບການເມືອງແລະສິນທໍາ

(ຂ) ຜູ້ຂຽນໃນເລື່ອງນີ້ໃຊ້ວັນນະສິນແນວໃດເພື່ອຈະໃຫ້ນິທານສະທ້ອນໃຫ້ເຫັນການໃຊ້ອໍານາດ ຢ່າງຖືກຕ້ອງຂອງເຈົ້າໜ້າທີ່ໃນການປົກຄອງ

**2.**

ບັດນີ້ກາລະນັບມື້ສ້ອຍ ຫຼາຍປີເປັນອັນຕ່າງ
ພະຫາຫເຫເດໄວ້ ພາຍສ້ອຍສາດສະນາ
ຊີສົມຊື້ ງົວຄວາຍຂາຍຈ່າຍ ມີແລ້ວ
ນັກປາດຖົມແມ່ນ້ຳ ນັດທີກວ້າງຂາດເຂີນ
ສັງຄະເຈົ້າ ທັງສິນບໍລິສຸດ ກໍດີ
ຍັງເລົ່າແປງຈ່າຍຊື້ ເງິນຄວ້າງຄ້າຂາຍ
ອັນວ່າໂຈໂຣໄດ້ ທວຍຄຳມາຂີ່ ມີແລ້ວ
ນັກປາດເປັນງ່າວງົ້ວ ຖືກະເບື້ອງຄວ່າຂໍ
ຄົນຫຼັກເປັນຄົນໃບ້ ໃຈເບົາຄຶດບໍ່ຖືກ ເສັຍແລ້ວ
ຫີນແຮ່ໄຫຼລ່ອງແກ້ວ ໂຣຮ້ອງສະນັ່ນເນື່ອງ
ພູຜາຂັ້ນ ເຜພັງໄຫຼລ່ອງ ນັດທີນັ້ນ
ຈຸມປວກເປັນຮູບຊ້າງ ສະຖຽນຮ້ອງແມ່ໂຂງ
ອັດສະຈັນໃຈກຸ້ງ ກຸມກິນປາປຶກໃຫຍ່
ປາຊິວມາໄລ່ແຂ້ ໄປຫຼີ້ລີບຫີນ ເສັຍນໍ
ຂຽດໂມ້ຮ້ອງ ປະສົງອ່ານໂຄງສານ ຫຼາກນໍ
ງູເຜົ່າພິດ ເຢືອກກົວເກັ້ງຢ້ານ
ປາປຶກຂຶ້ນຢູ່ລີ້ ປາຍໄມ້ດັ່ງແລນ
ປູປາຮູ້ເປີດນ້ຳ ໜີໜ່າຍອານາ
ອຽ່ນກໍມາເປີດນ້ຳ ໜີຈາກວັງຕົມ
ເຂົາກໍແປງຮວງຮັງ ຢູ່ເຖິງປາຍໄມ້
ຫົງຄຳກົ້ມຂາບໄຫວ້ ປະນົມນ້ອມແກ່ກາ
ໝາກໄມ້ມາເປີດຕົ້ນ ປີບປ່ອງລົງດິນ
ຄົກມອງຮ້າງ ໝາງເໜັນເຂົ້າເປືອກ
ຊ້າຫຼອດມາເປີດເບັ້ຍ ແຖມສິ້ນໃສ່ໄນ
ຈອງຈັນຫຼ້າງຂອງແພງ ທາງເທດສະເຜົາພຸ້ມ
ບັດນີ້ ເຈົ້າສັງມາຄວ່າຫ້ອຍ ຫູຊ້າທ່ຽວຂາຍ
ໝູຊິງທຳຕະປະໃຫ້ ແມວຄຳກົ້ມຂາບ ປາງນີ້
ໝາຈອກມາເຫົ່າຊ້າງ ເປັນໜ້າຢາກຫົວ
ຄັນຄາກຮ້ອງ ຂັດແຂ່ງໜີຝົນ
ໃສ້ເຖືອນຮູ້ ບິນບົນອາກາດ

ບໍ່ປາກົດຊື່ຜູ້ແຕ່ງ *ໂລກກະທາດ* (ບໍ່ປາກົດປີແຕ່ງ)

(ກ) ເລື່ອງນີ້ບອກແນວໃດກ່ຽວກັບການເສື່ອມທາງສິນທຳໃນສັງຄົມ

(ຂ) ອທິບາຍການໃຊ້ສັນຍາລັກຂອງຜູ້ຂຽນ